# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 18 ເມສາ 2010 (4-18-2010)

---

## <u>ມີການກະຕຸ້ນໃຈອັນຖືກຕ້ອງ</u>

**<u>ຂໍ້ພຣະຄັມພີໃນບົດຮຽນນີ້:</u>** 2 ໂກຣິນໂທ 5:9-21

**<u>ຄໍາຖາມຊີວິດ:</u>** ບົດຮຽນນີ້ຈະຊ່ອຍກະຕຸ້ນໃຈຂອງທ່ານໃຫ້ເຂົ້າປະກອບສ່ວນໃນການປະຕິບັດຮັບໃຊ້.

**<u>ພຣະຄັມພີແຫ່ງຄວາມຈິງ</u>:** ບົດຮຽນນີ້ເວົ້າສະເພາະເຖິງເຫດຜົນຂອງຜູ້ເຊື່ອເຂົ້າປະກອບສ່ວນໃນການປະຕິບັດຮັບໃຊ້.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ເປັນສິ່ງຄໍາຄັນຕ້ອງເຂົ້າໃຈຄືບໍ່ແມ່ນໃຫ້ສະມາຊິກໃນໂບດເຂົ້າປະກອບສ່ວນໃນການປະຕິບັດຮັບໃຊ້ເທົ່ານັ້ນ, ສະມາຊິກຕ້ອງເຂົ້າໃຈດີກັບສິ່ງທີ່ເຂົ້າປະກອບສ່ວນນໍານັ້ນມີເຫດຜົນອັນໃດ. ບົດຮຽນນີ້ໄດ້ເຕືອນສະມາຊິກໃຫ້ເຂົ້າໃຈເຖິງເຫດຜົນທີ່ພວກເຂົາເຈົ້າເຂົ້າປະກອບສ່ວນໃນການປະຕິບັດຮັບໃຊ້ນັ້ນ ການທີ່ເຂົ້າປະກອບສ່ວນກັບພັນທະກິດຂອງພຣະເຈົ້ານັ້ນມີກຽດເພາະພຣະເຈົ້າເປີດໂອກາດໃຫ້ກາຍເປັນຜູ້ຮ່ວມງານກັບສິ່ງພຣະເຈົ້າກະທໍາຕໍ່ໂລກ.

ມີອົງການນຶ່ງຊຶ່ງແມ່ໄດ້ຕັ້ງຂຶ້ນ ໄດ້ປະທ້ວງຕໍ່ຄົນກິນເຫລົ້າເມົາຂັບຣົດ. ອົງການນີ້ມີຊື່ວ່າ MADD ຊຶ່ງຕັ້ງຂຶ້ນໂດຍຍານາງ ແຄກດີ ໄລເນີ ໃນປີ 1980 ເພາະລູກສາວຂອງລາວຖືກຄົນເມົາເຫລົ້າຂັບຣົດຍຽບຈົນຕາຍ. ອົງການີ້ໄດ້ຮັບຄວາມສໍາເຣັດແລະມີຄົນເຂົ້າເປັນສະມາຊິກຫລາຍເພາະຍານາງ ແຄນດີ ໄດ້ຊັກຊວນໃຫ້ຜູ້ເປັນແມ່ທັງຫລາຍເຂົ້າໃຈເຖິງອັນຕະລາຍຂອງຄົນກິນເຫລົ້າເມົາແລ້ວຂັບຣົດ ແລະສິດທິຂອງຄົນໃນທ້ອງຖນົນ. ຕັ້ງແຕ່ອົງການນີ້ໄດ້ເກີດມາ ມີຄົນເປັນຈໍານວນພັນໆໄດ້ພົ້ນຈາກຣົດຕໍາຕາຍ.

ເປັນການສໍາຄັນຫລາຍກວ່າການຮັກສາບໍ່ໃຫ້ຣົດຕໍາຕາຍໃນດ້ານຮ່າງກາຍ ພວກເຮົາຄວນເຂົ້າເປັນພາກສ່ວນໃນການຮັບໃຊ້ປະກາດເຣື່ອງຂອງອົງພຣະຄຣິດເພາະພຣະອົງເປັນຜູ້ຮັກສາຈິດວິນຍານຂອງຜູ້ທີ່ເຊື່ອບໍ່ໃຫ້ຕາຍ. ການເຂົ້າຮັບໃຊ້ນີ້ແມ່ນຮັບໃຊ້ພຣະເຈົ້າ ແລະຄົນອື່ນໆຜູ້ທີ່ພຣະອົງສ້າງຂຶ້ນມາ. ກິຈການຂອງພຣະເຈົ້າໃນໂລກນີ້ຕ້ອງການຢາກໃຫ້ຜູ້ທີ່ເຊື່ອທຸກຄົນມີພາກສ່ວນ. ບົດຮຽນນີ້ຈະສອນໃຫ້ຜູ້ສຶກສາຮູ້ຈັກສາມປະເດັນວ່າເປັນຫຍັງຄຣິສຕຽນຄວນມີການກະຕຸ້ນໃຈອັນຖືກຕ້ອງເພື່ອຮັບໃຊ້ພຣະຄຣິດ ແລະຄົນອື່ນໆ.

### 1. <u>ເພາະຍ້ອນການເອົາໃຈໃສ່ຂອງພວກເຮົາ:</u> (2 ໂກຣິນໂທ 5:9-11)

ອາຈານໂປໂລເປັນເໝືອນການໂຄສະນາຖ່ານໂຄມໄຟດີບໍ່ໝົດກໍາລັງງ່າຍໆ. ອາຈານໂປໂລມີຈິດໃຈປະຕິບັດຮັບໃຊ້ຕາມບ່ອນສໍາຄັນຕ່າງໆ. ເພິ່ນມີເປົ້າໝາຍ (ຮັກສິ່ງທີ່ດີ ມີກຽດສັກສີ) ຊີວິດຂອງເພິ່ນເປັນທີ່ຖວາຍກຽດແກ່ພຣະເຈົ້າ. ພຣະເຈົ້າພໍພຣະທັຍໃນເມື່ອພວກເຮົາປະຕິບັດຮັບໃຊ້ຕາມພຣະປະສົງຂອງພຣະອົງ ແລະຍອມຮັກສາພຣະບັດຍັດ ແລະໃຫ້ກຽດແດ່ພຣະອົງເໜືອທຸກສິ່ງ. ສິ່ງທີ່ກ່າວມານີ້ໄດ້ມີຢູ່ໃນຊີວິດຂອງອາຈານໂປໂລຕລອດການເວລາ ບໍ່ວ່າ

ເພິ່ນຈະມີຊີວິດຢູ່ຫລືເວລາຕາຍໄປ. ເປົ້າໝາຍຢ່າງນີ້ຄວນມີຢູ່ໃນຊີວິດຂອງພວກເຮົາໃນທຸກວັນນີ້ເໝືອນກັນເພື່ອໃຫ້ພຣະເຈົ້າຊອບພຣະທັຍ.

ສິ່ງນຶ່ງຄວນຊັກຊວນຈິດໃຈຂອງຜູ້ເຊື່ອໃຫ້ຮັບໃຊ້ຄືວັນນຶ່ງພວກເຮົາທຸກຄົນຈະໄດ້ສຳຣວດກວດກາຈາກອົງພຣະຜູ້ເປັນເຈົ້າ. ທຸກຄົນຈະໄດ້ຖືກເອີ້ນໃຫ້ອອກໄປປາກົດຕົວຕໍ່ໜ້າພຣະອົງ: **ພວກເຮົາຈະປາກົດຕົວຕໍ່ການຕັນສິນຂອງພຣະຄຣິດ.** ຄວາມເວົ້າທີ່ແປວ່າຕັດສິນນັ້ນໄດ້ກ່າວເຖິງບ່ອນມອບລາງວັນໃຫ້ແກ່ນັກກິລາຜູ້ໄດ້ຊັຍຊະນະເລີດຈາກເຈົ້ານາຍຜູ້ນັ່ງບ່ອນສຳຄັນສູງໃນເມືອງໂກຣິນໂທ ເປັນບ່ອນດຽວທີ່ສານຕັດສິນຄົນຜູ້ທຳຜິດ. ເປັນການປຽບທຽບວ່າວັນນຶ່ງອົງພຣະເຢຊູຈະເປັນຄົນຕັດສິນ.

ການຕັດສິນຢ່າງນີ້ມີສຳລັບຄຣິສຕະຈັກເທົ່ານັ້ນ. ຄວາມເວົ້າ "ພວກເຮົາ" ໝາຍເຖິງອາຈານໂປໂລ ແລະເພື່ອນຮ່ວມງານ. ສິ່ງນີ້ຕ້ອງຄຳນວນໃຫ້ດີເພາະ**ທຸກໆຄົນຈະໄດ້ໃຊ້ຄືນກັບສິ່ງຕົນເອງໄດ້ເຮັດໃນຮ່າງກາຍນີ້**- ໃນຊົ່ວຊີວິດນີ້. ຄວາມພົ້ນນັ້ນບໍ່ໄດ້ຈັດເຂົ້າດ້ວຍການກະທຳໃນຕອນນີ້ ແຕ່ແມ່ນພວກເຮົາໄດ້ເຮັດຫຍັງແດ່ ຫລັງຈາກຮັບເອົາຄວາມພົ້ນແລ້ວແມ່ນ**ສິ່ງດີ ຫລືສິ່ງຊົ່ວຮ້າຍ.** ສິ່ງຊົ່ວຮ້າຍແມ່ນການກະທຳຜິດບາບ, ເຫັນແກ່ຕົວ, ແລະເຮັດສິ່ງບໍ່ມີຄ່າອັນໃດ.

**ເມື່ອຮູ້ສິ່ງນີ້**ໃນຊີວິດການສິດສອນຂອງອາຈານໂປໂລແລ້ວເຖິງເຣື່ອງການຕັນສິນ. ການເອົາໃຈໃສ່ຮັບໃຊ້ຂອງເພິ່ນນັ້ນຂຶ້ນກັບຄວາມຮູ້ແນ່ໃຈວ່າວັນນຶ່ງອົງພຣະຄຣິດຈະຕັດສິນທຸກຄົນທີ່ເຊື່ອ. ການຢຳເກງອົງ**ພຣະຜູ້ເປັນເຈົ້າ**ນັ້ນ ແລະການເອົາໃຈໃສ່ຕໍ່ພຣະເຈົ້ານັ້ນໄດ້ກະຕຸ້ນຈິດໃຈເພິ່ນແລະອອກໄປຊັກຊວນ**ຄົນອື່ນ** ໃຫ້ເຮັດເໝືອນຕົນເອງ. ມີຄວາມຢຳເກງເຖິງຄວາມບໍຣິສຸດ ແລະຄວາມທ່ຽງທັມຂອງພຣະເຈົ້າ (ເຮັບເຣີ 10:31; 12:29), ອາຈານໂປໂລສແວງຫາການຮັບໃຊ້ພຣະເຈົ້າ ເພື່ອໄປບອກຄົນໃຫ້ກັບໃຈເຂົ້າມາຫາພຣະອົງ ຫັນຫລັງໃສ່ຄວາມບາບ ແລະໄວ້ວາງໃຈໃນອົງພຣະເຢຊູແຕ່ຜູ້ດຽວ.

## 2. <u>ເພາະດ້ວຍຄວາມຮັກຂອງພຣະຄຣິດ:</u> (2 ໂກຣິນໂທ 5:11-15)

ອາຈານໂປໂລໄດ້ຊັກຊວນໃຫ້ຄົນທີ່ບໍ່ເຊື່ອກັບໃຈ ແລະໄວ້ວາງໃຈໃນອົງພຣະເຢຊູ ເພິ່ນຍັງຊັກຊວນໃຫ້ຄົນໃນເມືອງໂກຣິນໂທພູມໃຈວ່າເພິ່ນເປັນອັຄສາວົກແທ້. ເພິ່ນຕ້ອງການໃຫ້ຄົນໃນເມືອງນັ້ນຍິນດີໃນຕົວຂອງເພິ່ນພ້ອມດ້ວຍເພື່ອນຮ່ວມງານ ແລະ**ຕອບໂຕ້ຕໍ່ຜູ້ມັກອວດໂຕ**ກັບສິ່ງຂອງພາຍນອກ ແຕ່ບໍ່ແມ່ນ**ພາຍໃນຈິດໃຈ.** ເພິ່ນຫວັງວ່າຄົນໃນເມືອງໂກຣິນໂທຈະມອງເຫັນບຸຄລິກລັກສະນະຂອງເພິ່ນດີ ແລະເພື່ອຄວາມສຳນຶກຜິດແລະຊອບຂອງພວກເຂົາໄດ້ດີ.

**ຄວາມຮັກຂອງອົງພຣະຄຣິດໄດ້ກະຕຸ້ນໃຈໃຫ້ທ່ານເຮັດຫຍັງແດ່?**

- ໄວ້ວາງໃຈໃນພຣະອົງເພື່ອຮັບເອົາຄວາມພົ້ນ
- ແບ່ງປັນຄວາມເຊື່ອຂອງຕົນກັບເພື່ອນຜູ້ຢູ່ຮ່ວມກັນ
- ມີຊີວິດທີ່ເປັນການຖວາຍກຽດແດ່ພຣະເຈົ້າ
- ----------------------------------------------------------------
- ----------------------------------------------------------------
- ----------------------------------------------------------------

ຄວາມຮັກຂອງພຣະຄຣິດເປັນອີກອັນນຶ່ງຊຶ່ງກະຕຸ້ນໃຈໃຫ້ອາຈານໂປໂລຮັບໃຊ້ຢ່າງເອົາໃຈໃສ່. ຫລັກໄວຍະກອນຂອງພາສາກຣີກໃຊ້ເປັນຮູບພາບມາປະກອບໃນການແປ "ຄວາມຮັກຂອງພວກເຮົາຕໍ່ພຣະຄຣິດ," ໃນທີ່ສຸດພວກເຮົາເຂົ້າໃຈຄວາມຮັກຂອງອົງພຣະຄຣິດຕໍ່ພວກເຮົານັ້ນ ເວລາພຣະອົງໄດ້ຍອມຕາຍຢ່າງທຸກທໍຣະມານເທິງໄມ້ກາງ

ແຂນ. ພຣະຄຣິດຕາຍເພື່ອໝົດທຸກຄົນນັ້ນເປັນການກະຕຸ້ນໃຈໃຫ້ອາຈານໂປໂລຮັບໃຊ້. ຄໍາວ່າ ຄວບຄຸມຈິດໃຈໝາຍຄວາມວ່າພາຍໃນຖືກກະຕຸ້ນໃຫ້ເຮັດອັນນຶ່ງອັນໃດ. ທຸກໆຄົນຕ້ອງຕາຍ ຖ້າອົງພຣະເຢຊູບໍ່ຍອມຕາຍເພື່ອປະທານຄວາມພົ້ນແກ່ຜູ້ຮັບເຊື່ອ, ແມ່ນແລ້ວມີແຕ່ຜູ້ທີ່ເຊື່ອເທົ່ານັ້ນໄດ້ພົ້ນຈາກຄວາມຕາຍ.

ຄວາມຈິງທີ່ວ່າພຣະຄຣິດຕາຍເພື່ອທຸກຄົນນັ້ນແປວ່າພຣະອົງຊົງຕາຍແທນພວກເຮົາ ໃນນາມຂອງເຮົາ ແລະພຣະອົງໄດ້ຄືນພຣະຊົນມານັ້ນກໍແມ່ນພວກເຮົາມີຊີວິດອັນຕລອດໄປແລະມີອໍານາດໃນໂລກ. ພວກເຮົາຄວນມີຊີວິດຢູ່ໃນໂລກນີ້ຢ່າງໃດ? ອາຈານໂປໂລສອນບໍ່ໃຫ້ເປັນຄົນເຫັນແກ່ຕົວ (ບໍ່ໃຫ້ຢູ່ເພື່ອຕົນເອງ). ພວກເຮົາຄວນມີຊີວິດຢູ່ເພື່ອຜູ້ທີ່ຍອມຕາຍເພື່ອເຮົາແລະຄືນມາ. ພວກເຮົາທຸກຄົນຄວນມີຊີວິດຢູ່ເພື່ອພຣະຄຣິດຜູ້ຍອມເຮັດທຸກສິ່ງເພື່ອເຮົາ ເຖິງແມ່ນຕາຍກໍຍອມ. ບາງຄົນຄຶດວ່າເຮັດຢ່າງນີ້ເປັນຄົນເສັຽສະຕິ (ມາຣະໂກ 3:21; ກິຈການ 26:24) ແນວໃດກໍຕາມ ການຢູ່ເພື່ອພຣະເຈົ້າແລະເພື່ອມະນຸດນັ້ນ ເປັນສິ່ງທີ່ພໍໃຈຕໍ່ຜູ້ທີ່ເຊື່ອໃນອົງພຣະຄຣິດແທ້.

3. **<u>ເພາະດ້ວຍພຣະປະສົງຂອງພຣະເຈົ້າ</u>:** (2 ໂກຣິນໂທ 5:16-21)

ສິ່ງທີສາມທີ່ກະຕຸ້ນໃຈໃນຊີວິດຂອງຜູ້ທີ່ເຊື່ອໃຫ້ຮັບໃຊ້ຄືຍ້ອນພຣະປະສົງຂອງພຣະເຈົ້າ. ທຸກວັນນີ້ຜູ້ຮັບໃຊ້ທີ່ດີຂອງອົງພຣະຄຣິດໄດ້ແບ່ງປັນຕາມຄໍາສອນໃນພຣະຄັມພີໃໝ່, ພວກເຂົາມີລັກສະນະຂອງມະນຸດແລ້ວແມ່ນເປັນຄົນຜິດຄົນບາບ (ເພງສັຣເສີນ 51:5) ຈຸດປະສົງໃຫຍ່ຂອງພຣະເຈົ້າ**ແມ່ນເຮັດໃຫ້ໂລກນີ້ຄືນດີກັບພຣະອົງເອງ.** ການຄືນດີກັນນັ້ນຈໍາເປັນຕ້ອງທໍາລາຍກໍາແພງຊຶ່ງເປັນສັດຕຣູຂອງມະນຸດ ເພາະຄົນບາບນັ້ນບໍ່ສາມາດທີ່ຈະທໍາລາຍກໍາແພງທີ່ກີດກັ້ນໄດ້: ອົງພຣະເຈົ້າໄດ້ທໍາລາຍກໍາແພງ ແລະໃຫ້ຄົນຄືນດີໂດຍຜ່ານທາງອົງພຣະເຢຊູ. ອົງພຣະເຢຊູເທົ່ານັ້ນບໍ່ໄດ້ເຮັດບາບ ແລະພຣະອົງເຈົ້າໃຫ້ພຣະເຢຊູກາຍຜູ້ຮັບເອົາຄວາມບາບຂອງພວກເຮົາ. ອົງພຣະເຢຊູເປັນອົງທີ່ໃຊ້ໜີ້ຂອງຄວາມຜິດບາບ ເພື່ອພວກເຮົາຈະກາຍເປັນຄົນທ່ຽງທັມ. **ມັນເປັນການແລກປ່ຽນ**: ເຮົາເອົາຄວາມບາບຂອງເຮົາໃຫ້ພຣະຄຣິດ ແລະພຣະອົງຊົງປະທານຄວາມທ່ຽງທັມໃຫ້ແກ່ພວກເຮົາ.

ພວກເຮົາສາມາດມອງເຫັນຄວາມອັສຈັນແລະຄວາມປລາດໃນອົງພຣະ**ເຢຊູຄຣິດ**-ພວກເຮົາຖືກສ້າງຂຶ້ນໃໝ່. ນີ້ໝາຍເຖິງການເກີດໃໝ່ (ໂຢຮັນ 3:3). ສິ່ງເກົ່າໆໄດ້ລ່ວງພົ້ນໄປແລ້ວ ເບິ່ງແມ**ກາຍເປັນສິ່ງໃໝ່ທັງນັ້ນ.** ແປວ່າຊີວິດເກົ່າໄດ້ຖືກທໍາລາຍແລ້ວເຊັ່ນ: ນິສັຍ, ຫລັກຄວາມເຊື່ອ, ຄວາມຮັກ ແລະແຜນການຕ່າງໆ ໃນຊີວິດ.

ຊີວິດຊຶ່ງຄືນມາຈາກຕາຍກາຍເປັນສິ່ງໃໝ່; ການເປັນຄຣິສຕຽນນັ້ນບໍ່ແມ່ນພຽງປ່ຽນທິດທາງເທົ່ານັ້ນ ແຕ່ແມ່ນການປ່ຽນຖາວ-ມີພື້ນຖານໃໝ່ເພາະພວກເຮົາກາຍເປັນຄົນສິນທັມໂດຍອົງພຣະຄຣິດແລະອໍານາດການຄືນມາຈາກຕາຍ.

ການຄືນດີກັບພຣະເຈົ້າແມ່ນພຣະເຈົ້າເປັນຜູ້ເລີ້ມກິຈການໃນຊີວິດຂອງພວກເຮົາ ແລະພຣະເຈົ້າໄດ້ມອບພາຣະໃຫ້ພວກເຮົາໄປບອກຄົນອື່ນ**ໃຫ້ຄືນດີກັບພຣະອົງ.** ທ່ານຈະເຮັດແນວໃດເພື່ອເຂົ້າປະກອບສ່ວນຮັບໃຊ້ໃນການປະກາດເຣື່ອງຄືນດີກັບພຣະເຈົ້າຕໍ່ຄົນອື່ນ?

## ຜູ້ຕາງໜ້າ ຫລືທູດ

ອາຈານໂປໂລໝາຍຄວາມວ່າຢ່າງໃດກັບຄໍາເວົ້າວ່າ, "ພວກເຮົາເປັນທູດຂອງພຣະຄຣິດ"? ຕາມພາສາກຣີກແລ້ວໝາຍເຖິງຜູ້ຕາງໜ້າຄົນສໍາຄັນຣະຫວ່າງຊາດຕໍ່ຊາດ. ຄໍາເວົ້າໃນພຣະຄັມພີເດີມທີ່ເປັນພາສາກຣີກໃນປຶ້ມພຣະບັນຍັດສອງ 32:31 ໝາຍເຖິງຜູ້ຕາງໜ້າຈາກກຸງບາບີໂລນຜູ້ຖືກສົ່ງໄປຫາກະສັດເຮເຊກີຢາໃນກຸງເຢຣູຊາເລັມ. ໃນເມື່ອພວກເຮົາເປັນທູດຂອງພຣະຄຣິດ ພວກເຮົາມີໜ້າທີ່ຢ່າງໜ້ອຍສາມຢ່າງ: (1) ເປັນຜູ້ຕາງໜ້າທີ່ມີອໍານາດເຕັມຕົວຊຶ່ງໄດ້ຮັບມອບໝາຍຈາກເຈົ້ານາຍ; (2) ເປັນຜູ້ຕາງໜ້າຂອງຜູ້ທີ່ສົ່ງອອກໄປ (3) ຈຸດປະສົງແມ່ນເປັນຜູ້ບອກຂ່າວຫຼືສົ່ງຂ່າວ

ຄຣິສະຕຽນທຸກຄົນມີຄວາມຮັບຜິດຊອບແລະສິດທິໃນການເປັນທູດຂອງພຣະຄຣິດ; ພວກເຮົາເປັນຜູ້ຕາງໜ້າກະສັດຂອງສວັນ ເພື່ອປະກາດຂ່າວປະເສີດແລະບອກມະນຸດໃນໂລກນີ້ໃນພຣະນາມຂອງອົງພຣະຄຣິດ, "ເຮັດໃຫ້ຄືນດີກັບພຣະເຈົ້າ." ຂ່າວທີ່ບອກຄົນອື່ນນັ້ນແມ່ນພຣະຄຣິດເປັນພຣະບຸດຂອງພຣະເຈົ້າຜູ້ທີ່ "ເຮັດໃຫ້ໂລກນີ້ຄືນດີກັບພຣະອົງໄດ້."

ພັນທະກິດອັນສຳຄັນຂອງພຣະເຈົ້ານັ້ນຄືເຮັດໃຫ້ໂລກນີ້ຄືນດີກັບພຣະອົງໂດຍຜ່ານອົງພຣະເຢຊູຄຣິດຜູ້ເປັນພຣະບຸດນັ້ນ. ສິດທິພິເສດຂອງຄຣິສຕຽນຄືຊອກຫາວ່າພຣະເຈົ້າກຳລັງເຮັດຫຍັງ ແລະຍອມເຂົ້າມີພາກສ່ວນໃນພັນທະກິດອັນສຳຄັນຂອງພຣະອົງນັ້ນເສັຍ.

## ບົດຮຽນໃນຊີວິດ

ພັນທະກິດອັນສຳຄັນຂອງພຣະເຈົ້ານັ້ນແມ່ນເຮັດໃຫ້ໂລກນີ້ຄືນດີກັບພຣະອົງຜ່ານທາງອົງພຣະຄຣິດ. ສິດທິພິເສດຂອງຄຣິສຕຽນຄືຊອກຫາວ່າພຣະເຈົ້າກຳລັງເຮັດຫຍັງ ແລະຍອມເຂົ້າມີພາກສ່ວນໃນພັນທະກິດອັນສຳຄັນນັ້ນ. ພວກເຮົາຕ້ອງມີຈິດໃຈຢາກປະກອບສ່ວນຮ່ວມງານກັບພຣະເຈົ້າ (1) ເພາະຍ້ອນຄວາມຮູ້ດີວ່າວັນນຶ່ງອົງພຣະຄຣິດຈະເປັນຜູ້ພິພາກສາໂລກ (2) ເພາະຍ້ອນຄວາມຮັກຂອງພຣະຄຣິດ ແລະການສິ້ນພຣະຊົນເພື່ອມະນຸດທຸກຄົນ (3) ເພາະພຣະຄຣິດໄດ້ເອີ້ນພວກເຮົາໃຫ້ອອກໄປປະກາດການຄືນນັ້ນກັບຄົນອື່ນໃນໂລກນີ້.

ໃນອາທິດນີ້ທ່ານຈະເອົາບົດຮຽນນີ້ມາໃຊ້ໃນຊີວິດຂອງທ່ານຢ່າງໃດ?

- ຂຽນເປັນລາຍການວ່າທ່ານມີເປົ້າໝາຍຫຍັງແດ່ໃນຊີວິດ. ຄວາມສັມພັນຂອງທ່ານກັບອົງພຣະຄຣິດນັ້ນເໝາະສົມກັບເປົ້າໝາຍຂອງທ່ານບໍ່?
- ຄິດເຖິງຄວາມຮັກອັນຍິ່ງໃຫຍ່ຂອງພຣະຄຣິດນັ້ນສຳຄັນເທົ່າໃດ? ຍອມໃຫ້ຄວາມຮັກຂອງພຣະຄຣິດນັ້ນນຳພາ ແລະລົງມືຮັບໃຊ້.
- ຊອກຫາຫົນທາງທີ່ດີໃນຖານະທ່ານເປັນທູດຂອງພຣະຄຣິດເພື່ອປະກອບສ່ວນໃນການປະກາດຂ່າວປະເສີດໃນຄຣິສຕະຈັກຂອງທ່ານ.
- ເຮັດໃຫ້ມີໂຄງການປະກາດເກີດຂຶ້ນໂດຍໃຊ້ປື້ມຄູ່ມືອື່ນໆທີ່ຄົນອື່ນໃຊ້ມາແລ້ວແລະໄດ້ຜົນດີ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.